ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະພັດທະນາຊົນນະບົດ ແລະ
ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ (ຄພທສ)
**ກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ)**

ເລກທີ 0814 /ທລຍ
ວັນທີ 02 SEP 2016

## ບົດສະຫຼຸບປະຈຳເດືອນ ສິງຫາ 2016
## ແລະ ແຜນວຽກເດືອນ ກັນຍາ 2016

ທລຍ ຂັ້ນສູນກາງ ໄດ້ສຳເລັດການກຳນົດກຸ່ມບ້ານເປົ້າໝາຍສຳລັບການຈັດຕັ້ງປະຕິບັດ ທລຍ 3 ຊຶ່ງແມ່ນການປຶກສາຫາລື ແລະ ປະສານສົມທົບກັບຊ່ຽວຊານຈາກທະນາຄານໂລກ ບົນພື້ນຖານການພິຈາລະນາເງື່ອນໄຂດ້ານພົນລະເມືອງ, ການເຂົ້າເຖິງການບໍລິການພື້ນຖານໂຄງລ່າງຕ່າງໆ ລວມທັງໄລຍະທາງຂອງແຕ່ລະກຸ່ມບ້ານເປົ້າໝາຍ. ເງື່ອນໄຂຕ່າງໆທີ່ກ່າວມານັ້ນ ແມ່ນມີຜົນກະທົບຕໍ່ການຄັດເລືອກ ແລະ ການຈັດສັນງົບປະມານກຸ່ມບ້ານ. ສຳລັບ ທລຍ ໄລຍະ 3 ຈະໄດ້ຈັດຕັ້ງປະຕິບັດຢູ່ໃນ 257 ກຸ່ມບ້ານ ໃນ 43 ເມືອງ ຂອງ 10 ແຂວງ, ໃນຈຳນວນກຸ່ມບ້ານທີ່ໄດ້ຖືກຄັດເລືອກນັ້ນ ມີທັງກຸ່ມບ້ານໃໝ່ ແລະ ກຸ່ມບ້ານເກົ່າ ທີ່ໄດ້ຮັບການສະໜັບສະໜູນໃນ ທລຍ ໄລຍະຜ່ານມາ ແລະ ບາງກຸ່ມບ້ານກໍ່ບໍ່ໄດ້ຮັບການສືບຕໍ່ສະໜັບສະໜູນ ເນື່ອງຈາກບັນດາກຸ່ມບ້ານດັ່ງກ່າວ ໄດ້ມີເງື່ອນໄຂທີ່ດີຂຶ້ນ ຫລື ມີແຜນພັດທະນາຈາກພາກສ່ວນອື່ນແລ້ວ. ລາຍລະອຽດຂອງການຄັດເລືອກ ແລະ ການປ່ຽນແປງຕ່າງໆ ແມ່ນຈະໄດ້ສັງລວມໄວ້ໃນປຶ້ມບົດລາຍງານ ຊຶ່ງຈະສຳເລັດໃນໄວໆນີ້.

ໃນລະຫວ່າງວັນທີ 30-31 ສິງຫາ 2016 ທລຍ ຂັ້ນສູນກາງ ໄດ້ເຂົ້າຮ່ວມກອງປະຊຸມສະຫລຸບການຈັດຕັ້ງປະຕິບັດວຽກງານກໍ່ສ້າງຮາກຖານການເມືອງ, ພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ 9 ເດືອນ ແລະ ທິດທາງແຜນການປະຈຳປີ 2017. ໃນລະຫວ່າງກອງປະຊຸມ ທລຍ ກໍ່ໄດ້ນຳສະເໜີ ກ່ຽວກັບການຈັດຕັ້ງປະຕິບັດໂຄງການ ທລຍ ໄລຍະ 2 ແລະ ແຜນຈັດຕັ້ງປະຕິບັດ ທລຍ ໄລຍະ 3 ຕໍ່ກອງປະຊຸມ ຊຶ່ງແມ່ນການລາຍງານຄວາມສຳເລັດຂອງ ທລຍ 2 ແລະ ຄວາມຄືບໜ້າຂອງການກະກຽມ ທລຍ 3.

ທລຍ ຂັ້ນສູນກາງ ໄດ້ສຳເລັດການຮອບຮວມບັນດາແບບຟອມທີ່ຈະນຳໃຊ້ໃນການເກັບກຳຂໍ້ມູນການຈັດຕັ້ງປະຕິບັດຂອງ ທລຍ. ແບບຟອມດັ່ງກ່າວຈະເປັນເອກະສານອ້າງອີງໃຫ້ແກ່ບໍລິສັດພາຍນອກ ທີ່ຈະມາປັບປຸງລະບົບຖານຂໍ້ມູນຂອງ ທລຍ. ຈຸດປະສົງຂອງການຮອບຮວມ ແລະ ປັບປຸງບັນດາແບບຟອມ ແມ່ນເພື່ອຮັບປະກັນຄວາມຄົບຖ້ວນ ແລະ ເປັນເອກະພາບໃນການນຳໃຊ້ແບບຟອມຂອງທຸກພະແນກ, ທຸກໜ່ວຍງານ ລວມທັງເຮັດໃຫ້ແບບຟອມມີຄວາມສອດຄ່ອງກັບການນຳໃຊ້ຕົວຈິງທີ່ສຸດ. ການປັບປຸງລະບົບຖານຂໍ້ມູນ ແມ່ນພວມຢູ່ໃນຂັ້ນຕອນການສຶກສາລາຍລະອຽດ ແລະ ຄວາມຕ້ອງການຂອງໂຄງການ.

ສຳລັບວຽກງານຈັດຕັ້ງປະຕິບັດໂຄງການຍ່ອຍ ພາຍໃຕ້ທຶນສົມທົບລັດຖະບານບ້ວງສຸດທ້າຍຂອງ ທລຍ ໄລຍະ 2 ຮ່ວງ 5 ຕື້ ສຳລັບການຈັດຕັ້ງປະຕິບັດສາມເດືອນທ້າຍປີ 2016 ແມ່ນໄດ້ຮັບການອະນຸມັດຈາກສະພາແຫ່ງຊາດ ໃຫ້ຈັດຕັ້ງປະຕິບັດແລ້ວ ຊຶ່ງການຈັດຕັ້ງປະຕິບັດ ແລະ ການເບີກຈ່າຍທັງໝົດ ຈະສາມາດສຳເລັດພາຍໃນກຳນົດເວລາ. ພ້ອມດຽວກັນນີ້ ກໍ່ຈະໄດ້ສືບຕໍ່ຕິດຕາມການອະນຸມັດ ຮ່ວງ 11 ຕື້ ສຳລັບການຈັດຕັ້ງປະຕິບັດໃນປີ 2017.

## 1. <u>ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍ</u>

### 1.1. ຮອບວຽນ 13 (ສົກປີ 2015-2016)

ສຳລັບ ຮອບວຽນ 13 ເຊິ່ງເປັນຮອບວຽນສຸດທ້າຍຂອງໂຄງການ ທລຍ ໄລຍະທີ 2 ທັງເປັນໄລຍະເຊື່ອມຕໍ່ລະຫວ່າງ ທລຍ ໄລຍະທີ 2 ແລະ ໄລຍະທີ 3. ໃນຈຳນວນ 507 ໂຄງການຍ່ອຍທີ່ໄດ້ສົ່ງຂໍອະນຸມັດຈັດຕັ້ງປະຕິບັດຈາກຜູ້ໃຫ້ທຶນ, 504 ໂຄງການຍ່ອຍແມ່ນໄດ້ຮັບອະນຸມັດຈາກຜູ້ໃຫ້ທຶນເພື່ອການຈັດຕັ້ງປະຕິບັດ ແລະ ມີຄວາມຄືບໜ້າຫລາຍພໍສົມຄວນ. ມາຮອດທ້າຍເດືອນສິງຫາ ໄດ້ສຳເລັດການຈັດຕັ້ງປະຕິບັດທັງໝົດ 239 ໂຄງການຍ່ອຍ ຫລື ເທົ່າກັບ 47% ຂອງຈຳນວນໂຄງການທັງໝົດ ດັ່ງລາຍລະອຽດລຸ່ມນີ້:

ຕາຕະລາງ 1: ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນ 13:

| ແຂວງ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ແຂວງ ສະຫວັນນະເຂດ | 43 | 18 | 10 | | 15 |
| ແຂວງ ສາລະວັນ | 29 | 7 | 7 | 3 | 12 |
| ແຂວງ ຊຽງຂວາງ | 27 | 20 | | | 7 |
| ແຂວງ ຜົ້ງສາລີ | 41 | 9 | 11 | 11 | 10 |
| ແຂວງ ຫລວງນ້ຳທາ | 20 | 16 | | | 4 |
| ແຂວງ ຫົວພັນ | 73 | 46 | 13 | | 14 |
| ແຂວງ ຫຼວງພະບາງ | 75 | 36 | 23 | 5 | 11 |
| ແຂວງ ອຸດົມໄຊ | 109 | 51 | 44 | 8 | 6 |
| ແຂວງ ອັດຕະປື | 37 | 12 | 8 | 9 | 8 |
| ແຂວງ ເຊກອງ | 50 | 24 | 12 | 3 | 11 |
| **ລວມ** | **504** | **239** | **128** | **39** | **98** |

*ແຫລ່ງຂໍ້ມູນ: ລະບົບຖານຂໍ້ມູນ, 31 ສິງຫາ 2016*

### 1.2. ຮອບວຽນ 12 (ສົກປີ 20142015)

ສຳລັບຮອບວຽນ 12 (ສົກປີ 20142015) ມີຈຳນວນທັງໝົດ 438 ໂຄງການຍ່ອຍ ໃນນັ້ນຈຳນວນໂຄງການຍ່ອຍພາຍໃຕ້ທຶນພາຍໃນ ມີ 74 ໂຄງການ ເປັນມູນຄ່າປະມານ 16 ຕື້ກີບ ທີ່ໄດ້ຜ່ານການປະມູນແລ້ວ. ໃນນັ້ນຈັດຕັ້ງປະຕິບັດສຳເລັດແລ້ວ 100% ມີ 437 ໂຄງການເທົ່າກັບ 99%, ທີ່ຍັງເຫຼືອຈຳນວນ 1 ໂຄງການ ແມ່ນມີຄວາມຄືບ ໜ້າແລ້ວ 90% ແລະ ຄາດວ່າຈະສາມາດສຳເລັດທ້າຍເດືອນກັນຍາ 2016 ດັ່ງລາຍລະອຽດຕາມຕາຕະລາງລຸ່ມນີ້:

ຕາຕະລາງ 2. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນ 12:

| ແຂວງ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ສະຫວັນນະເຂດ | 59 | 59 | 0 | 0 | 0 |
| ສາລະວັນ | 31 | 31 | 0 | 0 | 0 |
| ຊຽງຂວາງ | 42 | 42 | 0 | 0 | 0 |
| ຜົ້ງສາລີ | 25 | 25 | 0 | 0 | 0 |
| ຫລວງນໍ້າທາ | 21 | 21 | 0 | 0 | 0 |
| ຫົວພັນ | 124 | 124 | 0 | 0 | 0 |
| ຫຼວງພະບາງ | 48 | 47 | 1 | 0 | 0 |
| ອຸດົມໄຊ | 50 | 49 | 0 | 0 | 0 |
| ອັດຕະປື | 18 | 18 | 0 | 0 | 0 |
| ເຊກອງ | 20 | 20 | 0 | 0 | 0 |
| ລວມ | **438** | **437** | **1** | **0** | **0** |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ຫລຍ, 31 ສິງຫາ 2016*

ຕາຕະລາງ 3. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນ 12 (ແຍກຕາມຂະແໜງການ)

| ຂະແໜງການ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ກະສິກຳ ແລະ ປ່າໄມ້ | 41 | 41 | 0 | 0 | 0 |
| ຄົມມະນາຄົມ | 75 | 75 | 0 | 0 | 0 |
| ສາທາລະນະສຸກ | 25 | 25 | 0 | 0 | 0 |
| ສຶກສາ | 165 | 164 | 1 | 0 | 0 |
| ນໍ້າສະອາດ ແລະ ສຸຂະອະນາໄມ | 130 | 130 | 0 | 0 | 0 |
| ພະລັງງານ ແລະ ບໍ່ແຮ່ | 2 | 2 | 0 | 0 | 0 |
| ລວມ | **438** | **437** | **1** | **0** | **0** |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ຫລຍ, 31 ສິງຫາ 2016*

ຕາຕະລາງ 4. ທຶນສົມທົບລັດຖະບານຮອບວຽນ 12

| ແຂວງ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ສະຫວັນນະເຂດ | 15 | 15 | 0 | 0 | 0 |
| ສາລະວັນ | 12 | 12 | 0 | 0 | 0 |
| ຊຽງຂວາງ | 13 | 13 | 0 | 0 | 0 |
| ຫົວພັນ | 21 | 21 | 0 | 0 | 0 |
| ອັດຕະປື | 10 | 10 | 0 | 0 | 0 |
| ເຊກອງ | 3 | 3 | 0 | 0 | 0 |
| ລວມ | **74** | **74** | **0** | **0** | **0** |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ຫລຍ, 31 ສິງຫາ 2016*

ຕາຕະລາງ 5. ທຶນສົມທົບລັດຖະບານຮອບວຽນ 12 (ແຍກຕາມຂະແໜງການ)

| ຂະແໜງການ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ກະສິກຳ ແລະ ປ່າໄມ້ | 9 | 9 | 0 | 0 | 0 |
| ຄົມມະນາຄົມ | 6 | 6 | 0 | 0 | 0 |
| ສາທາລະນະສຸກ | 8 | 8 | 0 | 0 | 0 |
| ສຶກສາ | 26 | 26 | 0 | 0 | 0 |
| ນ້ຳສະອາດ ແລະ ສຸຂະອະນາໄມ | 24 | 24 | 0 | 0 | 0 |
| ພະລັງງານ ແລະ ບໍ່ແຮ່ | 1 | 1 | 0 | 0 | 0 |
| ລວມ | 74 | 74 | 0 | 0 | 0 |

*<u>ແຫຼ່ງຂໍ້ມູນ</u>: ພະແນກຕິດຕາມ-ປະເມີນຜົນ, ທລຍ, 31 ສິງຫາ 2016*

### 1.3 ຮອບວຽນ 11 (ສົກປີ 2013-2014)

ການຈັດຕັ້ງປະຕິບັດມາຮອດທ້າຍເດືອນ ສິງຫາ 2016 ມີຄວາມຄືບໜ້າດັ່ງນີ້: ຈາກທັງໝົດ 333 ໂຄງການຍ່ອຍ, 331 ໂຄງການ (99%) ແມ່ນໄດ້ຈັດຕັ້ງປະຕິບັດສຳເລັດ 100%, ຈຳນວນທີ່ຍັງເຫຼືອ 2 ໂຄງການ ທັງໝົດແມ່ນມີຄວາມຄືບໜ້າຫລາຍກວ່າ 50% ຄາດວ່າຈະສຳເລັດໃນມໍ່ໆນີ້.

ຈາກຕາຕະລາງຂ້າງລຸ່ມນີ້ 2 ໂຄງການທີ່ບໍ່ທັນສຳເລັດ ແລະ ກຳລັງຈັດຕັ້ງປະຕິບັດຢູ່ ເຊິ່ງມີລາຍລະອຽດ ແລະຄວາມຄືບໜ້າດັ່ງຕາຕະລາງລຸ່ມນີ້:

ຕາຕະລາງ 6. ໂຄງການທີ່ຫລ້າຊ້າໃນຮອບວຽນ 11

| ຮອບວຽນ | ຊື່ໂຄງການ | ແຂວງ | ເມືອງ | ກຸ່ມບ້ານ | ບ້ານ | ຄວາມຄືບໜ້າ% |
|---|---|---|---|---|---|---|
| 11 | ກໍ່ສ້າງຂົວອູ່ | ແຂວງ ຫລວງນ້ຳທາ | ນາແລ | ພູຫຼວງ | ພູຫຼວງມີກຈິງ | 58 |
| 11 | ກໍ່ສ້າງຂົວອູ່ | ແຂວງ ຫລວງນ້ຳທາ | ລອງ | ບອກບໍ່ (ຈ່າໃໝ່ ) | ແສນຈຸມປ(ຈ່າປີ) | 65 |

*<u>ແຫຼ່ງຂໍ້ມູນ: ພະແນກຕິດຕາມປະເມີນຜົນ, ທລຍ, 31 ກໍລະກົດ 2016</u>*

2 ໂຄງການດັ່ງກ່າວແມ່ນຢູ່ ແຂວງ ຫຼວງນ້ຳທາ ຄືໂຄງການທົດລອງ ເຊິ່ງເປັນໂຄງການໃຫຍ່ຮ່ວມມືລະຫວ່າງ ທລຍ ແລະ ອົງການເຮວິຕັດ (Heveltas) ຄວາມລ່າຊ້າຍ້ອນຄວາມເຂັ້ມງວດໃນການກວດກາດ້ານຄຸນະພາບຂອງເຫຼັກ ແລະ ແບບໃນການກໍ່ສ້າງລວມທັງງົບປະມານທີ່ມີຢ່າງຈຳກັດ. ປະຈຸບັນແມ່ນພວມຄົ້ນຄວ້າຫາທິດທາງທີ່ເໝາະສົມເພື່ອແກ້ໄຂ ແລະ ຍັງບໍ່ສາມາດຕອບໄດ້ວ່າມື້ໃດຈຳສຳເລັດ.

## 2. <u>ງົບປະມານ ແລະ ການເບີກຈ່າຍສຳລັບການຈັດຕັ້ງປະຕິບັດໂຄງການຍ່ອຍ ທລຍ 2</u>

ສຳລັບການເບີກຈ່າຍງົບປະມານ ຮອດທ້າຍເດືອນ ສິງຫາ 2016 ໃນແຕ່ລະຮອບວຽນ ຄື: ຮອບວຽນ 9, ເບີກຈ່າຍໄປແລ້ວ 100% ເທົ່າກັບ 61,114,300,917 ກີບ, ຮອບວຽນ 10 ເບີກຈ່າຍໄປແລ້ວ 79,125,251,302 ກີບ

ເທົ່າກັບ 100% ຂອງງົບປະມານທັງໝົດ ແລະ ຮອບວຽນ 11 ແມ່ນໄດ້ເບີກຈ່າຍແລ້ວ ຈຳນວນ 77,335,634,453 ກີບ ຫລື ເທົ່າກັບ 99.9% ຂອງງົບປະມານທັງໝົດ ແລະ ສຳລັບຮອບວຽນ 12 ເບີກຈ່າຍໄປແລ້ວ 82,574,585,657 ກີບ ຫລື ເທົ່າກັບ 99% ຂອງງົບປະມານທັງໝົດ. ສ່ວນຮອບວຽນ 13 ແມ່ນໄດ້ມີການເບີກຈ່າຍແລ້ວ ຈຳນວນ 45,441,537,864 ກີບ ລາຍລະອຽດດັ່ງຕາຕະລາງລຸ່ມນີ້:

ຕາຕະລາງ 7. ຄວາມຄືບໜ້າໃນການເບີກຈ່າຍງົບປະມານໂຄງການຍ່ອຍ ແຕ່ລະຮອບວຽນ (2011-2016)

| ຮອບວຽນ (ສົກປີ) | ຈ/ນ ໂຄງການ ທັງໝົດ | ງົບປະມານ (ກີບ) | ຈ/ນ ກໍ່ສ້າງ ສຳເລັດ 100% | ການເບີກຈ່າຍ ງົບປະມານ (ກີບ) | ຍອດເຫຼືອ |
|---|---|---|---|---|---|
| ຮອບວຽນ 9 (2011-2012) | 262 | 61,114,300,917 | 261 | 61,114,300,917 | 0 |
| ຮອບວຽນ 10 (2012-2013) | 393 | 79,125,251,302 | 392 | 79,125,251,302 | 0 |
| ຮອບວຽນ 11 (2013-2014) | 333 | 77,447,824,567 | 331 | 77,335,634,453 | 112,190,114 |
| ຮອບວຽນ 12 (2014-2015) | 438 | 82,826,807,425 | 437 | 82,574,585,657 | 252,221,768 |
| ຮອບວຽນ 13 (2015-2016) | 504 | 86,636,863,168[1] | 239 | 45,441,537,864 | 41,195,325,304 |
| ລວມ | 1,930 | 387,151,047,379 | 1,660 | 345,591,310,193 | 41,559,737,186 |

*ແຫຼ່ງຂໍ້ມູນ: ພະແນກບໍລິຫານ-ການເງິນ, ກລຍ, 31 ສິງຫາ 2016*

## 3. ວຽກປັບປຸງຊີວິດການເປັນຢູ່ ເຊື່ອມສານໂພຊະນາການ (LN)

### 3.1. ກິດຈະກຳປັບປຸງຊີວິດການເປັນຢູ່

#### 3.1.1. ການທ້ອນເງິນ

ການທ້ອນເງິນໃນເດືອນ 8/2016 ຢູ່ໃນ 165 ບ້ານ, 696 ກຸ່ມບ້ານ ມີສະມາຊິກ 9,421 ຄົນ ເປັນຍິງ 8,030 ລວມທັງ 4 ເມືອງ ຂອງທັງ 2 ແຂວງຄື ແຂວງ ສະຫວັນ ແລະ ແຂວງ ຫົວພັນ. ໂດຍອີງໃສ່ການເຄື່ອນໄຫວລົງຕິດຕາມການທ້ອນເງິນ ແລະ ການປະຊຸມປະຈຳເດືອນ 7 ປີ 2016 ເງິນຝາກທັງໝົດໃນປະຈຸບັນມີ: **631,115,000** ກີບ.

ໝາຍເຫດ: ຕົວເລກເງິນຝາກ ຍັງແມ່ນຍອດຂອງເດືອນ 7/2016 ເນື່ອງຈາກຍັງລໍຖ້າຂໍ້ມູນປະຈຳເດືອນ 8 ຈາກສອງເມືອງ ທີ່ພວມເກັບກຳຢູ່ ແລະ ຈະໄດ້ລາຍງານໃນບົດລາຍງານຕາມພາຍຫລັງ.

#### 3.1.2. ການປ່ອຍເງິນໃຫ້ສະມາຊິກກູ້ຢືມ ເດືອນ 8/2106

ການປ່ອຍເງິນໃຫ້ສະມາຊິກກູ້ຢືມເພື່ອໄປທຳການຜະລິດເຊັ່ນ: ການລ້ຽງສັດການປູກຝັງ ແລະ ຫັດຖະກຳຕ່ຳຫູກ ທີ່ເປັນການສ້າງລາຍຮັບໃຫ້ແກ່ສະມາຊິກປັບປຸງຊີວິດການເປັນຢູ່ມາຮອດເດືອນ 8 ປີ2016ທີ່ ໄດ້ປ່ອຍໃຫ້..165.. ບ້ານ, 696 ກຸ່ມ ບໍ່ລວມຈຳນວນທີ່ກຳລັງຂະຫຍາຍ 142 ກຸ່ມໃຫມ່ ລວມມີສະມາຊິກ 9,421 ຄົນ ເປັນຍິງ 7,983 ຄົນ ລວມເປັນເງິນ 4,803,982,000

#### 3.1.3. ການສ້າງລາຍຮັບຂອງກຸ່ມ ກຊກ ໃນ 4 ເມືອງ:

---

[1] ຕົວເລກງົບປະມານດັ່ງກ່າວ ແມ່ນງົບປະມານຂອງ 448 ໂຄງການຍ່ອຍ ຈາກ 504 ໂຄງການຍ່ອຍ ທີ່ໄດ້ຮັບການອະນຸມັດໃຫ້ຈັດຕັ້ງປະຕິບັດ ເນື່ອງຈາກບາງໂຄງການແມ່ນຍັງຢູ່ໃນຂັ້ນຕອນການຈັດຊື້-ຈັດຈ້າງ ດັ່ງນັ້ນ ຈຶ່ງຍັງບໍ່ທັນໄດ້ບວກຈຳນວນ ແລະ ງົບປະມານໃສ່.

ການສ້າງລາຍຮັບສ່ວນ ແມ່ນໄດ້ຈາກກິດຈະກຳ ການລ້ຽງໄກ່, ການລ້ຽງປາ ,ການຕຳຫູກ, ການລ້ຽງໝູ, ລ້ຽງແບ້ ແລະ ອື່ນໆ ຂອງເມືອງທັງ 7 ເມືອງ ທີ່ນອນໃນ 2 ແຂວງຄື ແຂວງ ສະຫວັນ ແລະ ແຂວງຫົວພັນລວມມີ 165 ບ້ານ, 696 ກຸ່ມ ແລະ ກຳລັງຂະຫຍາຍອອກອີກ 142 ກຸ່ມ ມີສະມາຊິກທັງຫມົດ 9,9058 ຄົນ ເປັນຍິງ 7,920 ຄົນ,. ປະຈຸບັນມີລາຍຮັບຢູ່ທີ່ 3,263,543,500 ກີບ.

## 3.2. <u>ວຽກງານດ້ານໂພຊະນາການ</u>

ສະໂມສອນໂພຊະນາການແມ່ນກິດຈະກິດຈະກຳປຸງແຕ່ງອາຫານກາງວັນທີ່ຢູ່ໃນສະໂມສອນ, ໄດ້ນຳໃຊ້ຮ່ວງງົບປະມານ ເພື່ອດຳເນີນກິດຈະຂອງແຕ່ລະສະໂມສອນໂພຊະນາການເພື່ອປຸງແຕ່ງອາຫານ ພາຍໃນ 7 ເມືອງ ເຊິ່ງດຳເນີນຢູ່ໃນປະຈຸບັນ 4 ເມືອງ ແລະ ຈະເລີ່ມດຳເນີນການໃນອີກ 3 ເມືອງໃຫມ່ໃນຊ່ວງເດືອນ 8 ລວມມີທັງຫມົດ 23 ສູນ ໃນນັ້ນມີງົບປະມານຢູ່ 1,159,450,000 ກີບ, ເງິນໃນບັນຊີ **269,107,240**ກີບ, ເງິນສົດ **26,543,000**ກີບ, ຈຳນວນເງິນທີ່ໄດ້ຈ່າຍ **395,650,500**ກີບ ແລະ ຈຳນວນເງິນທີ່ຫຍັງເຫລືອ 707,080,500 ກີບ

### 3.2.1. ວຽກງານດ້ານໂພຊະນາສຶກສາ

ວຽກງານດ້ານໂພຊະນາສຶກສາໄດ້ເຮັດພາຍໃນເດືອນ ມີຫົວຂໍ້ດັ່ງນີ້:

1. ໃຫ້ຄວາມຮູ້ກ່ຽວກັບໝວດອາຫານ
- ຜັກທີ່ມີວິຕາມິນ(ປະເພດຜັກ)
- ອາຫານທີ່ມີໂປຼຕີນແລະວິທີປຸງແຕ່ງ
- ອາຫານຫຼັກທີ່ໃຫ້ພະລັງງານປະເພດທາດແປ້ງ
2. ສຸຂະອານາໄມວສະອາດ
3. ໃຫ້ຄວາມໃນການດູແລເດັກເກີດໃໝ່ແລະດູແລໂຕໃນໄລຍະແມ່ຫຼັງເກີດ

### 3.2.2. ວຽກງານໂພຊະນາການ ແມ່ ແລະ ເດັກ

4. ລົງເຄື່ອນໄຫວໂຄສະນາສຸຂະສຶກສາ ແລະ ໂພຊະນາສຶກສາທີ່ເຊື່ອມໂຍງກັບວຽກງານຊີວິດການເປັນຢູ່
5. ບໍລິການກວດທ້ອງແມ່ມານ(ໃຫ້ຢາທາດເຫຼັກ ອາຊິດຟູລິກ)
6. ກວດແມ່ຫຼັງເກີດ
7. ສັກຢາວັກຊິນໃຫ້ເດັກກຸ່ມເປົ້າໝາຍ
8. ໃຫ້ຢາຂ້າແມ່ທ້ອງສຳລັບເດັກກຸ່ມເປົ້າໝາຍ
9. ໃຫ້ຢາທາດ(ເຫຼັກອາຊິດຟູລິກ)ແກ່ແມ່ຍິງໄວຈະເລີນພັນ ອາຍຸ 12-45 ປີ
10. ການວາງແຜນຄອບຄົວ
11. ໃຫ້ສຸຂະສຶກສາຄວາມເຂົ້າໃຈຄວາມໝາຍຄວາມສຳຄັນ ຂອງການສັກຢາວັກຊິນໃຫ້ແຕ່ລະເກນອາຍຸ
12. ຕິດຕາມພັດທະນາການເດັກ ພ້ອມທັງປະເມີນສະພາວະໃນເດັກ

### 3.2.3. ວຽກງານພັດທະນາສວນຄົວ

1. ນຳພາສະມາຊິກປູກຜັກໃສ່ສວນຄົວໃຫ້ໄດ້ຫຼາຍຊະນິດ
2. ອະນາໄມບົວລະບັດສວນຄົວຢູ່ສະໂມສອນ.

4. <u>ແຜນວຽກປະຈຳເດືອນ ກັນຍາ 2016</u>

- ຈັດກອງປະຊຸມປະຈຳປີ ທລຍ ເພື່ອສະຫລຸບຕີລາຜົນໄດ້ຮັບ ທລຍ 2 ແລະ ແຜນການຈັດຕັ້ງປະຕິບັດ ທລຍ 3 ໃນລະຫວ່າງວັນທີ 5 – 9 ກັນຍາ 2016.
- ສືບຕໍ່ຕິດຕາມຄວາມຄືບໜ້າຂອງການຈັດຕັ້ງປະຕິບັດຮອບວຽນທີ 13 ເພື່ອໃຫ້ທຸກໂຄງການສາມາດຈັດຕັ້ງປະຕິບັດ  ສຳເລັດກ່ອນປິດໂຄງການ ທລຍ ໄລຍະທີ 2 ໄປຄຽງຄູ່ກັບການກະກຽມວຽກງານ ທລຍ ໄລຍະທີ 3 ເປັນຕົ້ນການ ວາງແຜນ, ການຝຶກອົບຮົມພະນັກງານ ແລະ ການທົບທວນພາລະບົດບາດຕ່າງໆ.
- ຕິດຕາມການຮັບຮອງໂຄງການ ພາຍໃຕ້ທຶນສົມທົບລັດຖະບານ ງວດສຸດທ້າຍສຳລັບ ທລຍ 2 ເພື່ອໃຫ້ສາມາດຈັດຕັ້ງປະຕິບັດໄດ້ທັນເວລາ ແລະ ສອດຄ່ອງກັບການຊີ້ນຳຂອງສະພາແຫ່ງຊາດ.
- ປັບປຸງລະບົບຖານຂໍ້ມູນ ສຳລັບ ທລຍ ໄລຍະ 3.

ຜູ້ອຳນວຍການບໍລິຫານ ທລຍ

ບຸນກວ້າງ ສຸວັນນະພັນ